ກະຊວງວິທະຍາສາດແລະເຕັກໂນໂລຊີ
ຂາເຂົ້າ
ເລກທີ...0142...ກວຊ
ລົງວັນທີ...21 JAN 2014...
ເວລາ...1504...
ສົ່ງເຖິງ...

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ລັດຖະບານ

ເລກທີ: 29 /ລບ

ນະຄອນຫລວງວຽງຈັນ, ວັນທີ 20.1.2014

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະກຳມາທິການແຫ່ງຊາດ ກ່ຽວກັບ ຍຸດທະສາດປະຕິຮູບສາທາລະນະສຸກຮອດປີ 2020

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໜັງສືສະເໜີຂອງ ທ່ານ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ສະບັບເລກທີ 215/ນຍ, ລົງວັນທີ 04 ທັນວາ 2012, ສະເໜີສະພາແຫ່ງຊາດ ເອົາຮ່າງຍຸດທະສາດປະຕິຮູບສາທາລະນະສຸກ ເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VII;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ວ່າດ້ວຍ ການຮັບຮອງເອົາຍຸດທະສາດສາທາລະນະສຸກຮອດປີ 2020 ສະບັບເລກທີ 044/ສພຊ.VII, ລົງວັນທີ 19 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງ ກະຊວງສາທາລະນະສຸກ ສະບັບເລກທີ 2229/ສທ, ລົງວັນທີ 15 ພະຈິກ 2013.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 01: ຈຸດປະສົງ**

ດຳລັດສະບັບນີ້ແມ່ນ ເພື່ອກຳນົດພາລະບົດບາດ, ໜ້າທີ່, ຂອບເຂດ, ສິດ, ໂຄງປະກອບ ແລະ ແບບແຜນວິທີເຮັດວຽກຂອງ ຄະນະກຳມາທິການແຫ່ງຊາດ ກ່ຽວກັບການປະຕິຮູບສາທາລະນະສຸກແຫ່ງຊາດ, ເປັນບ່ອນອີງໃຫ້ແກ່ ການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມາທິການ ດັ່ງກ່າວ ໃນການສ້າງແຜນການປະຕິຮູບ ແລະ ສ້າງຄວາມອາດສາມາດໃນການປຸກລະດົມ, ສົ່ງເສີມອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສາກົນ ແລະ ສັງຄົມ ໃນຂອບເຂດທົ່ວປະເທດ ຈັດຕັ້ງຜັນຂະຫຍາຍ ແຜນຍຸດທະສາດປະຕິຮູບສາທາລະນະສຸກແຫ່ງຊາດ ໃຫ້ບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້.

## ໝວດທີ II
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 02: ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການປະຕິຮູບສາທາລະນະສຸກ ເປັນອົງການຈັດຕັ້ງຂອງລັດຖະບານທີ່ເຄື່ອນໄຫວບໍ່ປະຈຳການ ທີ່ມີຊື່ຫຍໍ້ວ່າ: (ຄປສທ) ມີພາລະບົດບາດຊ່ວຍລັດຖະບານ ແລະ ນາຍົກລັດຖະມົນຕີ ໃນການຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດປະຕິຮູບສາທາລະນະສຸກແຫ່ງຊາດ ແລະ ປຸກລະດົມຂົນຂວາຍທຶນຮອນ ແລະ ການປະກອບສ່ວນຂອງສັງຄົມ ໃຫ້ແກ່ການປະຕິຮູບສາທາລະນະສຸກ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 03: ໂຄງປະກອບບຸກຄະລາກອນ**

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການປະຕິຮູບສາທາລະນະສຸກ ປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

1. ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ເປັນປະທານ
2. ທ່ານ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ຮອງປະທານ
3. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ຮອງປະທານ
4. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ ຮອງປະທານ
5. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ກຳມະການ
6. ທ່ານ ຮອງຫົວໜ້າ ຄະນະຈັດຕັ້ງສູນກາງພັກ ກຳມະການ
7. ທ່ານ ຮອງປະທານ ຄະນະກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ກຳມະການ
8. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ ກຳມະການ
9. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ກິລາ ກຳມະການ
10. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກຳມະການ
11. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້ ກຳມະການ
12. ທ່ານ ລັດຖະມົນຕີຊ່ວຍວ່າ ການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກຳມະການ
13. ທ່ານ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ ກຳມະການ
14. ທ່ານ ຮອງເລຂາສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ກຳມະການ
15. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ ກຳມະການ ແລະ ທັງເປັນເລຂາທິການ ຂອງຄະນະກຳມາທິການດັ່ງກ່າວ.

### ມາດຕາ 04: ໂຄງປະກອບກົງຈັກຊ່ວຍວຽກ

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການປະຕິຮູບສາທາລະນະສຸກແຫ່ງຊາດ ມີກົງຈັກຊ່ວຍວຽກຂອງຕົນ ເອີ້ນວ່າ: ກອງເລຂາ ຊຶ່ງປະກອບດ້ວຍ ຫົວໜ້າ ແລະ ຮອງກົມຂອງ ກະຊວງສາທາລະນະສຸກ:

| | |
|---|---|
| 1. ທ່ານ ຫົວໜ້າຫ້ອງການກະຊວງສາທາລະນະສຸກ | ຫົວໜ້າ |
| 2. ທ່ານ ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ | ຮອງຫົວໜ້າ |
| 3. ທ່ານ ຮອງຫົວໜ້າກົມການເງິນ | ຮອງຫົວໜ້າ |
| 4. ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ຄະນະ |
| 5. ທ່ານ ຮອງຫົວໜ້າກົມອະນາໄມ ແລະ ສົ່ງເສີມສຸຂະພາບ | ຄະນະ |
| 6. ທ່ານ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່ | ຄະນະ |
| 7. ທ່ານ ຮອງຫົວໜ້າກົມປິ່ນປົວ | ຄະນະ |
| 8. ທ່ານ ຮອງຫົວໜ້າກົມອາຫານ ແລະ ຢາ | ຄະນະ |
| 9. ທ່ານ ຮອງຫົວໜ້າກົມການສຶກສາ ແລະ ຄົ້ນຄ້ວາວິທະຍາສາດ | ຄະນະ |
| 10. ທ່ານ ຮອງຫົວໜ້າກົມກວດກາ | ຄະນະ |
| 11. ທ່ານ ຮອງອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ | ຄະນະ |

## ໝວດທີ IV
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 05: ໜ້າທີ່

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການປະຕິຮູບສາທາລະນະສຸກ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

5.1. ພິຈາລະນາຮັບຮອງເອົາ ແຜນການຈັດຕັ້ງປະຕິບັດ ການປະຕິຮູບສາທາລະນະສຸກ ຂອງ ສປປ ລາວ.

5.2. ສະເໜີລັດຖະບານ ແລະ ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ ລະບົບສາທາລະນະສຸກໃໝ່ ແລະ ລະບຽບກົດໝາຍ, ນິຕິກຳຕ່າງໆທີ່ຈຳເປັນໃຫ້ແກ່ການປະຕິຮູບສາທາລະນະສຸກ.

5.3. ເປັນໃຈກາງໃນການຊີ້ນຳ, ປະສານງານກັບບັນດາກະຊວງ, ຄະນະກຳມະການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ພົວພັນຮ່ວມມືກັບຕ່າງປະເທດ ເພື່ອຜັນຂະຫຍາຍແຜນການປະຕິຮູບສາທາລະນະສຸກ.

5.4. ປຸກລະດົມຂົນຂວາຍແຫຼ່ງທຶນຈາກພາກລັດ ແລະ ພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ການຈັດຕັ້ງປະຕິບັດ ແຜນຍຸດທະສາດປະຕິຮູບສາທາລະນະສຸກແຫ່ງຊາດ.